ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1406/ກປ
ນະຄອນຫຼວງວຽງຈັນ, ວັນທີ 03 APR 2025

# ຂໍ້ຕົກລົງ
# ວ່າດ້ວຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍຊັບສິນທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ສະບັບເລກທີ 280/ລບ, ລົງວັນທີ 09 ສິງຫາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມກວດກາປ່າໄມ້ ສະບັບເລກທີ 1784/ກກປມ, ລົງວັນທີ 06 ທັນວາ 2024;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 1225/ຫກ, ລົງວັນທີ 24 ມີນາ 2025.

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ລວມທັງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນໃຫ້ລັດຄຸ້ມຄອງ ເພື່ອປົກປັກຮັກສາ, ຂຶ້ນບັນຊີ, ຂຶ້ນທະບຽນ, ຄຸ້ມຄອງ, ນຳໃຊ້ ແລະ ຂາຍ ໄມ້ ແລະ ຜະລິດຕະພັນໄມ້ ດັ່ງກ່າວ ຕາມກົດໝາຍ ແນໃສ່ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ ແລະ ສັງຄົມ ແຫ່ງຊາດ ທັງຮັບປະກັນໃຫ້ການຈັດຕັ້ງປະຕິບັດ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 2 ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ

ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແມ່ນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ອີງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ໄດ້ອອກຄຳສັ່ງ ຍຶດ ຫຼື ອາຍັດໄວ້.

ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ ແມ່ນໄມ້ ແລະ ຜະລິດຕະພັນໄມ້ ທີ່ສານປະຊາຊົນ ໄດ້ຕັດສິນຮິບ ໄມ້ ແລະ ຜະລິດຕະພັນໄມ້ ດັ່ງກ່າວມາເປັນຂອງລັດ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄມ້ ແລະ ຜະລິດຕະພັນໄມ້ ເສື່ອມຄຸນນະພາບໄວ** ໝາຍເຖິງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຈະໂດກ, ເປົ່າເປື່ອຍ, ແຕກ, ຄົດ, ງໍ, ບິດບ້ຽວ ໄວ ຊຶ່ງຈະເກີດຄວາມເສຍຫາຍ ແລະ ສົ່ງຜົນກະທົບໂດຍກົງ ຕໍ່ມູນຄ່າຂອງ ໄມ້ ແລະ ຜະລິດຕະພັນໄມ້;

2. **ໄມ້ ແລະ ຜະລິດຕະພັນໄມ້ ທີ່ຫຍຸ້ງຍາກໃນການປົກປັກຮັກສາ** ໝາຍເຖິງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ບໍ່ມີຄົນ ຫຼື ສະຖານທີ່ ໃນການປົກປັກຮັກສາ;

3. **ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນໃຫ້ລັດຄຸ້ມຄອງ** ໝາຍເຖິງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ບໍ່ມີເຈົ້າຂອງ ຫຼື ມີຂໍ້ຂັດແຍ່ງ ຊຶ່ງສານປະຊາຊົນ ໄດ້ຕັດສິນໃຫ້ລັດຄຸ້ມຄອງ;

4. **ການປະມູນຂາຍໄມ້ ແລະ ຜະລິດຕະພັນໄມ້** ໝາຍເຖິງ ການແຂ່ງຂັນທາງດ້ານລາຄາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ນໍາມາປະມູນຂາຍ ເພື່ອໃຫ້ໄດ້ລາຄາເພີ່ມຂຶ້ນ;

5. **ການຍຶດ ໄມ້ ແລະ ຜະລິດຕະພັນໄມ້** ໝາຍເຖິງ ການນໍາເອົາໄມ້ ແລະ ຜະລິດຕະພັນໄມ້ ທີ່ອີງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ອອກຄໍາສັ່ງ ຍຶດ ເພື່ອນໍາມາເກັບຮັກສາ ຫຼື ທ້ອນໂຮມໄວ້ບ່ອນທີ່ປອດໄພ;

6. **ການອາຍັດ ໄມ້ ແລະ ຜະລິດຕະພັນໄມ້** ໝາຍເຖິງ ການມອບໄມ້ ແລະ ຜະລິດຕະພັນໄມ້ ທີ່ອີງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ອອກຄໍາສັ່ງ ອາຍັດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຄຸ້ມຄອງ, ປົກປັກຮັກສາ ແລະ ບໍ່ອະນຸຍາດໃຫ້ ຊື້ ຂາຍ, ເຄື່ອນຍ້າຍ, ມອບ, ໂອນ, ແລກປ່ຽນ, ຈໍານໍາ, ຄໍ້າປະກັນ, ທໍາລາຍ ຫຼື ປ່ຽນແປງ ແລະ ອື່ນໆ;

7. **ການຮິບເປັນຂອງລັດ** ໝາຍເຖິງ ການເອົາໄມ້ ແລະ ຜະລິດຕະພັນໄມ້ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ມາເປັນຂອງລັດ ຕາມຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ ທີ່ນໍາໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ**

ການຄຸ້ມຄອງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. ຮັບປະກັນປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ບໍ່ໃຫ້ຕົກເຮ່ຍ, ເສຍຫາຍ;
3. ນໍາໃຊ້ໃຫ້ຖືກຕາມກົດໝາຍ ແລະ ລະບຽບການ;
4. ຮັບປະກັນຄວາມຖືກຕ້ອງ, ຍຸຕິທໍາ, ໂປ່ງໃສ ແລະ ກວດສອບໄດ້;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ນໍາໃຊ້ ໄມ້ ແລະ ຜະລິດຕະພັນໄມ້.

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ອີງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ລວມທັງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນໃຫ້ລັດຄຸ້ມຄອງ.

## ໝວດທີ 2
## ການຄຸ້ມຄອງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ

**ມາດຕາ 6 ການຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້**

ໃນກໍລະນີ ເຈົ້າໜ້າທີ່ປ່າໄມ້ ຫາກພົບເຫັນການກະທໍາຜິດ ເຊິ່ງໜ້າ ແລະ ຮີບດ່ວນ ໂດຍໄດ້ກວດພົບ ໄມ້

ແລະ ຜະລິດຕະພັນໄມ້ ທີ່ສົງໄສວ່າ ໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ ໃຫ້ເຈົ້າໜ້າທີ່ປ່າໄມ້ ຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ນັ້ນໄວ້ ໂດຍມີການກວດກາ, ກວດນັບລະອຽດ ແລະ ເຮັດບົດບັນທຶກ ຍຶດ, ອາຍັດ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ດຳເນີນຄະດີ.

ໃນກໍລະນີ ພົບເຫັນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຕິດພັນກັບການກະທຳຜິດ ແຕ່ບໍ່ເຫັນຜູ້ກະທຳຜິດ ຫຼື ຜູ້ກະທຳຜິດເອົາຕົວຫຼົບໜີ ໃຫ້ເຈົ້າໜ້າທີ່ປ່າໄມ້ ຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ດັ່ງກ່າວ ເພື່ອດຳເນີນຄະດີ ຕາມກົດໝາຍ.

ໃນການດຳເນີນການສືບສວນ-ສອບສວນ ຖ້າຫາກໄດ້ຮູ້ແຈ້ງ ກ່ຽວກັບປະເພດ, ຈຳນວນ, ຊະນິດ, ຂະໜາດ, ບໍລິມາດ, ນ້ຳໜັກ, ຄຸນນະພາບ  ແລະ ສະຖານທີ່ເກັບມ້ຽນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ນຳໃຊ້ເຂົ້າໃນການກະທຳຜິດ, ໄດ້ມາຈາກການກະທຳຜິດ ຫຼື ພົວພັນກັບການກະທຳຜິດ ແລະ ນຳໃຊ້ເປັນປະໂຫຍດໃນການດຳເນີນຄະດີ ໃຫ້ຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ອອກຄຳສັ່ງ ຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ນັ້ນ ຕາມແບບພິມ (ຂ 1 ສຳລັບຄຳສັ່ງ ຍຶດ ຫຼື ຂ 2 ສຳລັບຄຳສັ່ງ ອາຍັດ).

ການຍຶດ ຕ້ອງດຳເນີນໂດຍຊ້ອງໜ້າເຈົ້າຂອງ ໄມ້ ແລະ ຜະລິດຕະພັນໄມ້ ຫຼື ຜູ້ຕາງໜ້າຄອບຄົວຂອງຜູ້ກ່ຽວ, ອົງການປົກຄອງບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ແລະ ພະຍານ ຢ່າງໜ້ອຍ ສອງຄົນ ຂຶ້ນໄປ.

ການອາຍັດ ໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ແຈ້ງຄຳສັ່ງ ອາຍັດໃຫ້ ເຈົ້າຂອງ ໄມ້ ແລະ ຜະລິດຕະພັນໄມ້ ຫຼື ຜູ້ຕາງໜ້າຄອບຄົວຂອງຜູ້ກ່ຽວ, ອົງການປົກຄອງບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ.

ການຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ທຸກຄັ້ງ ຕ້ອງເຮັດບົດບັກທຶກ ໂດຍກຳນົດແຈ້ງ ກ່ຽວກັບວັນ, ເວລາ, ສະຖານທີ່, ຊື່ ແລະ ນາມສະກຸນ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ລາຍການ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ. ເມື່ອເຮັດບົດບັນທຶກແລ້ວ ຕ້ອງອ່ານໃຫ້ຜູ້ເຂົ້າຮ່ວມຟັງ ແລ້ວໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງເທົ່ານັ້ນ ລົງລາຍເຊັນ ແລະ ແປະໂປ້ມືໄວ້.

**ມາດຕາ 7 ການຂຶ້ນບັນຊີ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ**

ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ຕ້ອງໄດ້ຂຶ້ນບັນຊີ ຢ່າງລະອຽດ ເປັນຕົ້ນ ປະເພດ, ຈຳນວນ, ຊະນິດ, ຂະໜາດ, ບໍລິມາດ, ນ້ຳໜັກ ແລະ ຄຸນນະພາບ ຕາມແບບພິມ (ກ 1 ສຳລັບໄມ້ທ່ອນ, ຕໍໄມ້ ແລະ ປຸດໄມ້; ກ 2 ສຳລັບໄມ້ແປຮູບ ແລະ ຜະລິດຕະພັນໄມ້ ເຄິ່ງສຳເລັດຮູບ ແລະ ກ 3 ສຳລັບຜະລິດຕະພັນໄມ້ ສຳເລັດຮູບ).

ການໝາຍໜ້າໄມ້ທ່ອນ, ຕໍໄມ້, ປຸດໄມ້, ໄມ້ຕິດັບ ແລະ ໄມ້ແປຮູບ ໃຫ້ນຳໃຊ້ສີດຳ ເປັນສີຂອງພື້ນ, ສຳລັບການຂຽນລະຫັດ ໃຫ້ນຳໃຊ້ສີປອນ ເພື່ອຢັ້ງຢືນເຖິງບໍລິມາດ ຫຼື ນ້ຳໜັກຂອງໄມ້ ຍົກເວັ້ນ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ.

ການຂຶ້ນບັນຊີ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແມ່ນຄວາມຮັບຜິດຊອບຂອງເຈົ້າໜ້າທີ່ປ່າໄມ້ ແລະ ຖືເປັນບັນຊີສຸດທ້າຍ.

**ມາດຕາ 8 ການປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຍຶດ**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຍຶດ ນັ້ນ ໄວ້ບ່ອນທີ່ປອດໄພ ຫຼື ສະຖານທີ່ ທີ່ເໝາະສົມ ເພື່ອບໍ່ໃຫ້ຕົກເຮ່ຍ, ເສຍຫາຍ. ໃນກໍລະນີ ໄມ້ ແລະ ຜະລິດຕະພັນໄມ້ ດັ່ງກ່າວ ຫາກຕົກເຮ່ຍ, ເສຍຫາຍ ຫຼື ສັບປ່ຽນ ຍ້ອນການລະເມີດ ກົດໝາຍ, ລະບຽບການ ຫຼື ຂາດຄວາມຮັບຜິດຊອບໃນການປົກປັກຮັກສາ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຫຼື ຜູ້ຮັບຜິດຊອບໃນການປົກປັກຮັກສາ ຕ້ອງຮັບຜິດຊອບ ຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ແລະ ມີຄວາມຮັບຜິດຊອບຕາມກົດໝາຍ.

**ມາດຕາ 9 ການປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ອາຍັດ**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ເປັນຜູ້ຄຸ້ມຄອງ, ປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ອາຍັດ ຫຼື ມອບໃຫ້ ເຈົ້າຂອງ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເປັນຜູ້ປົກປັກຮັກສາ ໂດຍມີບົດບັນທຶກຮ່ວມ ຕາມແບບພິມ (ຄ 1 ບົດບັນທຶກມອບຄວາມຮັບຜິດຊອບໃນການປົກປັກຮັກສາ).

ກໍລະນີ ໄມ້ ແລະ ຜະລິດຕະພັນໄມ້ ດັ່ງກ່າວ ຫາກຕົກເຮ່ຍ, ເສຍຫາຍ ຫຼື ສັບປ່ຽນ ຍ້ອນການລະເມີດກົດໝາຍ, ລະບຽບການ ຫຼື ຂາດຄວາມຮັບຜິດຊອບໃນການປົກປັກຮັກສາ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຫຼື ເຈົ້າຂອງ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນຜູ້ປົກປັກຮັກສາ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ແລະ ມີຄວາມຮັບຜິດຊອບຕາມກົດໝາຍ ຕາມແຕ່ລະກໍລະນີ.

**ມາດຕາ 10 ການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ**

ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ນັ້ນ ຫາກເຫັນວ່າ ຈະໂດກເນົ່າ ຫຼື ເຊື່ອມຄຸນນະພາບໄວ ໃຫ້ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ພິຈາລະນາອອກຄໍາສັ່ງຂາຍໄດ້ ຕາມແບບພິມ (ຄ 2 ຄໍາສັ່ງຂາຍໄມ້).

ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ ຫຼື ອາຍັດ ນັ້ນ ຖ້າພິຈາລະນາແລ້ວ ຫາກມີຄວາມຫຍຸ້ງຍາກໃນການປົກປັກຮັກສາ ຊຶ່ງໄດ້ປະສານກັບພາກສ່ວນກ່ຽວຂ້ອງແລ້ວ ແຕ່ຍັງບໍ່ມີຄົນ ຫຼື ສະຖານທີ່ ໃນການປົກປັກຮັກສາ, ໃຫ້ຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ສະເໜີໃຫ້ອົງການໄອຍະການປະຊາຊົນ ພິຈາລະນາອອກຄໍາສັ່ງຂາຍ ໄມ້ ແລະ ຜະລິດຕະພັນໄມ້ດັ່ງກ່າວ ຕາມແບບພິມ (ຄ 3 ໜັງສືສະເໜີຂໍອະນຸມັດຄໍາສັ່ງຂາຍໄມ້).

ການຂາຍໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ທຸກກໍລະນີ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ພິຈາລະນາໃນການແຕ່ງຕັ້ງຄະນະກໍາມະການ ຊຶ່ງປະກອບມີ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ຂະແໜງປ່າໄມ້, ຂະແໜງການອຸດສາຫະກໍາ ແລະ ການຄ້າ, ຂະແໜງການການເງິນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອປະເມີນລາຄາ ແລະ ປະມູນຂາຍ ຕາມກົດໝາຍ ແລະ ລະບຽບການ.

ລາຍຮັບ ທີ່ໄດ້ຈາກການຂາຍໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ນັ້ນ, ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ເກັບຮັກສາໄວ້ຢູ່ທະນາຄານທຸລະກິດ ຫຼື ຄັງເງິນແຫ່ງຊາດ ເພື່ອລໍຖ້າຄໍາຕັດສິນຂອງສານ.

**ມາດຕາ 11 ການສັງລວມບັນຊີໄມ້ ແລະ ຜະລິດຕະພັນໄມ້**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງສັງລວມບັນຊີ ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ຍຶດ ຫຼື ອາຍັດ ນັ້ນ ລວມທັງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ປະມູນຂາຍ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ແລ້ວສົ່ງໃຫ້ຂະແໜງການການເງິນ ເພື່ອຕິດຕາມລາຍການ ໄມ້ ແລະ ຜະລິດຕະພັນໄມ້ດັ່ງກ່າວ ພາຍໃນກໍານົດເວລາ ເຈັດວັນ ນັບແຕ່ວັນໄດ້ສົ່ງສໍານວນຄະດີ ໃຫ້ອົງການໄອຍະການປະຊາຊົນເປັນຕົ້ນໄປ.

**ມາດຕາ 12 ການກວດກາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ ຕາມຄໍາຕັດສິນຂອງສານ**

ພາຍຫຼັງໄດ້ຮັບໜັງສືສະເໜີ ພ້ອມດ້ວຍຄໍາຕັດສິນຂອງສານ ຈາກອົງການປະຕິບັດຄໍາຕັດສິນຂອງສານ, ໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສະຫຼຸບ, ສັງລວມບັນຊີ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນຮິບ ເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ເພື່ອມອບໃຫ້ຂະແໜງການການເງິນ. ສໍາລັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນໃຫ້ສົ່ງຄືນເຈົ້າຂອງນັ້ນ, ໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ມອບ ໄມ້ ແລະ ຜະລິດຕະພັນໄມ້ ດັ່ງກ່າວ ໃຫ້ອົງການປະຕິບັດຄໍາຕັດສິນຂອງສານ ເພື່ອສົ່ງຄືນໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ.

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ປະສານສົມທົບກັບ ອົງການປະຕິບັດຄໍາຕັດສິນຂອງສານ, ຂະແໜງການການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຮ່ວມກັນກວດກາໄມ້ ແລະ ຜະລິດຕະພັນໄມ້ຕົວຈິງ ແລະ ໃຫ້ເຮັດບົດບັນທຶກການກວດກາ ໂດຍມີການເຊັນຢັ້ງຢືນຂອງພາກສ່ວນທີ່ກ່ຽວຂ້ອງ ທີ່ເຂົ້າຮ່ວມກວດກາ. ໃນກໍລະນີ ຈໍາເປັນຕ້ອງໄດ້ລົງກວດກາຂໍ້ມູນລະອຽດຕື່ມ ຫຼື ບໍ່ພົບ ແລະ ບໍ່ຄົບ ຕາມຈໍານວນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນຮິບ ເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ, ໃຫ້ປຶກສາຫາລື ແລະ ຕົກລົງກໍານົດວັນ, ເວລາ, ສະຖານທີ່ ແລະ ຮູບແບບການກວດກາ ຄັ້ງຕໍ່ໄປ.

**ມາດຕາ 13 ການມອບ-ຮັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ**

ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ກວດກາ ເຫັນວ່າມີຈິງ ແລະ ຖືກຕ້ອງຕາມຄໍາຕັດສິນຂອງສານ, ໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມອບໃຫ້ຂະແໜງການການເງິນ ໂດຍເຮັດບົດບັນທຶກການມອບ-ຮັບ ຊ້ອງໜ້າພະນັກງານປະຕິບັດຄໍາຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 14 ການຄຸ້ມຄອງໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ**

ຂະແໜງການການເງິນ ເປັນຜູ້ຄຸ້ມຄອງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສານຕັດສິນຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຢ່າງລວມສູນ ດ້ວຍການຂຶ້ນບັນຊີ, ຂຶ້ນທະບຽນເປັນຊັບສິນຂອງລັດ ແລະ ຄົ້ນຄວ້າ ກ່ຽວກັບການແບ່ງປັນການ ນໍາໃຊ້, ຂາຍ ເພື່ອສະເໜີຂັ້ນເທິງ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 15 ການນໍາໃຊ້ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ**

ຂະແໜງການການເງິນ ເປັນຜູ້ຄົ້ນຄວ້າ ການສະເໜີຂໍນໍາໃຊ້, ເງື່ອນໄຂ ແລະ ຄວາມຈໍາເປັນ ເພື່ອສະເໜີຂັ້ນເທິງ ພິຈາລະນາ ແບ່ງປັນນໍາໃຊ້ ໄມ້ ແລະ ຜະລິດຕະພັນໄມ້ ຕາມກົດໝາຍ.

ການນໍາໃຊ້ ໄມ້ ແລະ ຜະລິດຕະພັນໄມ້ ຕ້ອງຮັບປະກັນໃຫ້ຖືກຕ້ອງ ຕາມຈຸດປະສົງ, ເປົ້າໝາຍ ແລະ ນໍາໃຊ້ເຂົ້າໃນວຽກງານລວມຂອງລັດ.

**ມາດຕາ 16 ການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ**

ການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບເປັນຂອງລັດ ຫຼື ໃຫ້ລັດຄຸ້ມຄອງ ຕາມຄໍາຕັດສິນຂອງສານທີ່ນໍາໃຊ້ໄດ້ຢ່າງເດັດຂາດ ແມ່ນຄວາມຮັບຜິດຊອບຂອງ ຂະແໜງການການເງິນ ບົນພື້ນຖານການແຕ່ງຕັ້ງຄະນະກໍາມະການ ຊຶ່ງປະກອບມີ ຂະແໜງການການເງິນ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ຂະແໜງການອຸດສາຫະກໍາ ແລະ ການຄ້າ ເພື່ອປະເມີນລາຄາ ແລະ ປະມູນຂາຍ ຕາມລະບຽບການກໍານົດ.

**ມາດຕາ 17 ລາຍຮັບຈາກການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ**

ລາຍຮັບຈາກການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຮິບ ເປັນຂອງລັດ ແມ່ນມອບເຂົ້າກອງທຶນປົກປັກຮັກສາປ່າໄມ້ ຊາວ ສ່ວນຮ້ອຍ (20%) ຕາມທີ່ໄດ້ກໍານົດໄວ້ໃນດໍາລັດ ວ່າດ້ວຍກອງທຶນປົກປັກຮັກສາປ່າໄມ້ ສະບັບເລກທີ 567/ລບ, ລົງວັນທີ 16 ກັນຍາ 2021 ແລະ ສ່ວນທີ່ເຫຼືອແມ່ນມອບເຂົ້າເປັນງົບປະມານແຫ່ງລັດ.

**ມາດຕາ 18 ການເຄື່ອນຍ້າຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ**

ການເຄື່ອນຍ້າຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ທີ່ໄດ້ຜ່ານການປະມູນ ຊື້ ຂາຍ ຕາມລະບຽບການ ໂດຍການຈ່າຍຄ່າພັນທະ, ຄ່າທໍານຽມ, ອາກອນ ແລະ ຕິດຕາ ປມ, ມີເອກະສານອະນຸຍາດເຄື່ອນຍ້າຍຈາກຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 19 ລະບົບຖານຂໍ້ມູນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ**

ອີງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ເປັນເຈົ້າການໃນການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງ, ພັດທະນາ, ຄຸ້ມຄອງ ແລະ ນໍາໃຊ້ລະບົບຖານຂໍ້ມູນ ກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ, ໃຫ້ລັດຄຸ້ມຄອງ ຫຼື ສົ່ງຄືນໃຫ້ເຈົ້າຂອງ ຫຼື ຜູ້ມີສິດຄອບຄອງ ໃຫ້ມີຄວາມທັນສະໄໝ, ສາມາດເຊື່ອມໂຍງກັບຂະແໜງການ ແລະ ທ້ອງຖິ່ນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການກໍານົດ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ຊື້ ຂາຍ, ມອບໂອນ, ເຄື່ອນຍ້າຍ ຫຼື ລັກເອົາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ຄອບຄອງ, ນໍາໃຊ້ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ປົກປິດ, ຊຸກເຊື່ອງ, ປອມແປງ ຫຼື ທໍາລາຍ ຂໍ້ມູນ ກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ;
4. ໃຫ້ ຫຼື ຮັບ ສິນບົນ, ຊື້ຈ້າງ ແລະ ສົມຮູ້ຮ່ວມຄິດ ໃນການເອົາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ມາເປັນຂອງຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຄອບຄອງ ແລະ ນໍາໃຊ້ ໄມ້ ແລະ ຜະລິດຕະພັນໄມ້ທີ່ຖືກຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສວຍໃຊ້ໜ້າທີ່ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ທວງເອົາ, ຂໍເອົາ ຫຼື ຮັບສິນບົນ ກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ເພື່ອຜົນປະໂຫຍດຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ໝູ່ຄະນະ;
4. ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບ ຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;
5. ກໍານົດເອົາເອງ ກ່ຽວກັບ ບໍລິມາດ, ຕີລາຄາປະມູນຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
6. ປິດບັງ, ຊຸກເຊື່ອງ ຫຼື ສັບປ່ຽນທາງດ້ານປະລິມານ ຫຼື ຄຸນນະພາບຂອງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ;
7. ນໍາເອົາເງິນຈາກການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ແລະ ຮິບ ເປັນຂອງລັດ ໄປນໍາໃຊ້ໂດຍບໍ່ໄດ້ຮັບອະນຸຍາດ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຄຸ້ມຄອງ ແລະ ກວດກາ ວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ

**ມາດຕາ 22 ອົງການຄຸ້ມຄອງ ວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ**

ອົງການຄຸ້ມຄອງ ວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ປະກອບມີ ດັ່ງນີ້:

1. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນສູນກາງ;
2. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ;
3. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນເມືອງ.

**ມາດຕາ 23 ສິດ ແລະ ໜ້າທີ່ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນສູນກາງ**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ, ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນເມືອງ ແລະ ພາກສ່ວນກ່ຽວຂ້ອງ;
2. ຄົ້ນຄວ້າລະບຽບການ, ຂຶ້ນແຜນງົບປະມານ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ;
3. ຊຸກຍູ້, ຕິດຕາມ ແລະ ປະສານສົມທົບກັບອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ ແລະ ພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ;
4. ສະເໜີຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະກອບເປັນຄະນະກຳມະການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ;
5. ຄຸ້ມຄອງ ປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ແລະ ລາຍຮັບຈາກການຂາຍໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ຈົນກ່ວາການດຳເນີນຄະດີຈະສິ້ນສຸດ;
6. ອອກຄຳສັ່ງ ຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນເມືອງ ແລະ ພາກສ່ວນກ່ຽວຂ້ອງ;
2. ເປັນເຈົ້າການ ສັງລວມ ແລະ ຂຶ້ນບັນຊີ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສົງໄສວ່າໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ ເພື່ອອອກຄຳສັ່ງ ຍຶດ ແລະ ອາຍັດ;
3. ສະເໜີຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະກອບເປັນຄະນະກຳມະການຂາຍ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ ແລະ ອາຍັດ;
4. ຄຸ້ມຄອງ ປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ແລະ ລາຍຮັບຈາກການຂາຍໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ຈົນກ່ວາການດຳເນີນຄະດີຈະສິ້ນສຸດ;

5. ອອກຄຳສັ່ງ ຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ;

6. ສະຫຼຸບລາຍງານ ວຽກງານຄຸ້ມຄອງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນສູນກາງ ໃນແຕ່ລະໄລຍະ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນເມືອງ**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້;

2. ເກັບກຳ ແລະ ສັງລວມຂໍ້ມູນກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສົງໄສວ່າໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ;

3. ຄຸ້ມຄອງ ແລະ ປົກປັກຮັກສາ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ຈົນກ່ວາການດຳເນີນຄະດີຈະສິ້ນສຸດ ຕາມການມອບໝາຍ;

4. ນຳສະເໜີ ຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ ເພື່ອອອກຄຳສັ່ງ ຍຶດ, ອາຍັດ ໄມ້ ແລະ ຜະລິດຕະພັນໄມ້ ທີ່ສົງໄສວ່າໄດ້ນຳໃຊ້ເຂົ້າໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດ;

5. ສະຫຼຸບລາຍງານ ວຽກງານຄຸ້ມຄອງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນແຂວງ ໃນແຕ່ລະໄລຍະ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 26 ເນື້ອໃນການກວດກາ**

ການກວດກາວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ;

3. ການຄຸ້ມຄອງ, ການປົກປັກຮັກສາ ແລະ ການນຳໃຊ້ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ;

4. ຄວາມຮັບຜິດຊອບ ຂອງເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ.

**ມາດຕາ 27 ຮູບການການກວດກາວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ**

ການກວດກາວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາວຽກງານ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກ ຍຶດ, ອາຍັດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ດຳເນີນຄະດີທາງແພ່ງ ຫຼື ອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນ ສູນກາງ, ແຂວງ ແລະ ເມືອງ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 20 ພຶດສະພາ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**